ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ ພະຈິກ 2014)

ຄະນະຮັບຜິດຊອບ ທລຍ ສູນກາງ

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

10 ທັນວາ 2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ

ລຶບລ້າງຄວາມທຸກຍາກຂັ້ນສູນກາງ

**ກອງທຶນຫຼຸດຜ່ອນຄວາມທຸກຍາກ**

# <u>ບົດລາຍງານ</u>

# ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳເດືອນ ພະຈິກ ແລະ ແຜນປະຈຳເດືອນ ທັນວາ 2014

## I. ສະພາບການໂດຍລວມ

ໂດຍລວມແລ້ວ, ວຽກທີ່ພົ້ນເດັ່ນພາຍໃນເດືອນ ພະຈິກ 2014 ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ລວມມີ:

1) ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍ ຂອງ ສົກປີ 2013 – 2014 ແລະ ຕິດຕາມແຜນຂອງການຈັດຕັ້ງປະຕິບັດໃນສົກປີ 2014-2015.
2) ກະກຽມສົ່ງບົດລາຍງານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກປະຈຳສົກປີ 2013-2014
3) ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດທາງສະໄໝ ແລະ ຂຶ້ນແຜນງົບປະມານສຳລັບ ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ.
4) ຜົນການຈັດຕັ້ງປະຕິບັດວຽກງານດ້ານວິຊາສະເພາະຂອງແຕ່ລະພະແນກ ແລະ ໂດຍສະເພາະຫນ້າວຽກທີ່ພົ້ນເດັ່ນ.

## II. ການຕິດຕາໜ້າວຽກໂຄງການຍ່ອຍ

### 2. 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍຮອບວຽນ 11 ຂອງ (ສົກປີ 2013 – 2014)

### 2.1.1. ດ້ານການກໍ່ສ້າງໂຄງລ່າງພື້ນຖານ

ໃນສົກປີ 2013-2014 (ຮອບວຽນ 11) ທລຍ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 10 ແຂວງ, 42 ເມືອງ, 278 ກຸ່ມບ້ານ ແລະ ກວມເອົາ 1951 ບ້ານ, ໃນຮອບວຽນດັ່ງກ່າວ ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນ 333 ໂຄງການ ແລະ ໃຊ້ງົບປະມານທັງໝົດປະມານ 9,698,846 ໂດລາສະຫະລັດ. ຕົກມາຮອດທ້າຍເດືອນ ພະຈິກ 2014 ຈຳນວນ 265 ໂຄງການ (76.27 %) ຂອງໂຄງການທັງໝົດໄດ້ຈັດຕັ້ງປະຕິບັດສຳເລັດ 100% ເພີ່ມຂຶ້ນ 7.2 % ຈາກເດືອນທີ່ຜ່ານມາ. ພ້ອມດຽວກັນນັ້ນກໍ່ມີຈານວນ 45 ໂຄງ ການໄດ້ຈັດຕັ້ງປະຕິບັດຄືບໜ້າຫລາຍກວ່າ 50% ຂອງໜ້າວຽກທັງໝົດ ແລະ ຄາດວ່າຈະສຳເລັດໃນມໍ່ໆນີ້. ສຳລັບໂຄງ ການທີ່ເຫລືອຖືວ່າເປັນໂຄງການທີ່ຂ້ອນຂ້າງລ້າຊ້າເນື່ອງຈາກສະພາບດິນຟ້າ

ອາກາດໃນຊ່ວງລະດູຝົນ ແລະ ໂຄງການເຫລົ່າ ນັ້ນຕັ້ງຢູ່ເຂດທຸລະກັນດານ ສະນັ້ນພາກສ່ວນທີ່ກ່ຽວຂ້ອງແມ່ນໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ເພື່ອໃຫ້ໂຄງການເຫລົ່ານັ້ນສໍາເລັດ ແລະ ອໍານວຍຄວາມສະດວກສູງສຸດແກ່ຊຸມຊົນ  ໂດຍການຕິດຕາມຢ່າງປົກກະຕິຂອງພະນັກງານ ທລຍ ແລະ ອົງການກ່ຽວຂ້ອງຂັ້ນທ້ອງຖິ່ນ (ລາຍລະ ອຽດຕາມຕາຕະລາງ 1  ແລະ 2)

ຕາຕະລາງ 1. ຄວາມຄືບໜ້າແບ່ງຕາມຂະແໜງການ

| ຂະແໜງການ | ຈໍານວນໂຄງການຍ່ອຍ | 0% | <50% | >=50% | 100% |
|---|---|---|---|---|---|
| ສຶກສາ | 119 | 1 | 6 | 14 | 98 |
| ຄົມມະນາຄົມ | 57 | 0 | 5 | 9 | 43 |
| ພະລັງງານໄຟຟ້າ | 6 | 0 | 2 | 2 | 2 |
| ສາທາລະນະສຸກ | 22 | 1 | 0 | 4 | 17 |
| ນໍ້າສະອາດ | 91 | 1 | 5 | 14 | 71 |
| ກະສິກໍາ | 38 | 0 | 2 | 2 | 34 |
| ລວມ | **333** | **3** | **20** | **45** | **265** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ  ພະຈິກ 2014*

ຕາຕະລາງ 2. ຄວາມຄືບໜ້າແບ່ງຕາມແຂວງ

| ແຂວງ | ຈໍານວນໂຄງການ | 0% | <50% | >=50% | 100% |
|---|---|---|---|---|---|
| ຜົ້ງສາລີ | 23 | 0 | 0 | 0 | 23 |
| ອຸດົມໄຊ | 54 | 0 | 0 | 0 | 54 |
| ຫລວງພະບາງ | 43 | 0 | 3 | 13 | 27 |
| ຫລວງນໍ້າທາ | 16 | 0 | 0 | 2 | 14 |
| ຫົວພັນ | 69 | 0 | 0 | 7 | 62 |
| ຊຽງຂວາງ | 29 | 0 | 0 | 0 | 29 |
| ສະຫວັນນະເຂດ | 45 | 0 | 7 | 12 | 26 |
| ສາລະວັນ | 16 | 0 | 2 | 7 | 7 |
| ເຊກອງ | 20 | 0 | 2 | 3 | 15 |
| ອັດຕະປື | 18 | 3 | 6 | 1 | 8 |
| ລວມ | **333** | **3** | **20** | **45** | **265** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ  ພະຈິກ 2014.*

### 2.1.2. ດ້ານການເງິນ

ສໍາລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ພະຈິກ 2014 ໄດ້ມີການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນ 49,837,300,568 ກີບ ເທົ່າກັບ 64,23% ຂອງງົບປະມານທັງໝົດ (77,590,771,510 ກີບ) ສໍາລັບການຈັດຕັ້ງປະຕິບັດໂຄງການໃນຮອບວຽນດັ່ງກ່າວ ແລະ ຍັງມີບາງແຂວງແມ່ນກໍາລັງຢູ່ໃນຂັ້ນຕອນການກະກຽມເອກະສານ. ເຊິ່ງລາຍລະອຽດດັ່ງຕາຕະລາງ 3 ລຸ່ມນີ້:

ຕາຕະລາງ 3. ຄວາມຄືບໜ້າດ້ານການເງິນ (ກີບ)

| ແຂວງ | ງົບປະມານ (USD) | ງົບປະມານ (LAK) | 1st | 2nd | 3rd | 1st+2nd+3rd |
|---|---|---|---|---|---|---|
| ຫົວພັນ | 1,718,110 | 13,744,881,007 | 5,373,942,128 | 3,661,067,938 | - | 9,035,010,066 |
| ສະຫວັນນະເຂດ | 1,412,226 | 11,297,809,236 | 3,356,662,465 | 1,924,239,403 | - | 5,280,901,868 |
| ຊຽງຂວາງ | 845,871 | 6,766,964,761 | 1,700,698,641 | 1,460,862,133 | - | 3,161,560,774 |
| ສາລະວັນ | 549,360 | 4,394,878,390 | 573,531,467 | 88,371,020 | - | 661,902,487 |
| ຫລວງນ້ຳທາ | 445,274 | 3,562,188,983 | 1,742,680,071 | 1,383,587,508 | 70,605,161 | 3,196,872,740 |
| ເຊກອງ | 672,229 | 5,377,831,629 | 3,116,913,054 | 1,364,881,585 | 70,294,377 | 4,552,089,016 |
| ອັດຕະປື | 522,001 | 4,176,007,158 | 1,090,573,811 | - | - | 1,090,573,811 |
| ຜົ້ງສາລີ | 618,719 | 4,949,755,094 | 2,179,070,266 | 949,085,637 | 84,271,446 | 3,212,427,349 |
| ອຸດົມໄຊ | 1,648,401 | 13,187,209,433 | 7,721,285,050 | 4,666,551,771 | - | 12,387,836,821 |
| ຫລວງພະບາງ | 1,266,656 | 10,133,245,819 | 5,281,789,198 | 1,976,336,438 | - | 7,258,125,636 |
| | 9,698,846 | 77,590,771,510 | 32,137,146,151 | 17,474,983,433 | 225,170,984 | 49,837,300,568 |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ ຫລຍ, ພະຈິກ 2014*

IDA : ອົງການຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ/ກອງທຶນສາກົນເພື່ອລຸດຜ່ອນຄວາມທຸກຍາກ (ທະນາຄານໂລກ).

SDC : ອົງການຮ່ວມມືເພື່ອການພັດທະນາປະເທດສະວິດເຊີແລນ.

Water : ໂຄງການກ່ຽວກັບນ້ຳສະອາດຂອງ SDC.

GOL : ໂຄງການລົງທຶນທຶນລັດຖະບານ.

**2.1.3. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 11 (GOL) ຮອດທ້າຍເດືອນ ພະຈິກ 2014**

ໃນນັ້ນເປັນໂຄງການທີ່ລັດຖະບານໃຫ້ການສະໜັບສະໜູນທັງໝົດຈຳນວນ 63 ໂຄງການ ຢູ່ແຂວງຫົວພັນ, ແຂວງຊຽງຂວາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະ ແຂວງອັດຕະປື. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍໃນບ້ວງທຶນລົງທຶນຂອງລັດຖະບານ ມາຮອດ ທ້າຍເດືອນ ພະຈິກ 2014, ມີ 42 ໂຄງການແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ 100 %, ສ່ວນໂຄງການທີ່ຍັງເຫລືອແມ່ນຢູ່ໃນຂັ້ນຕອນຈັດຕັ້ງປະຕິບັດ ແລະ ຄາດວ່າຈະສາມາດສຳເລັດໃນໄວໆນີ້.(ລາຍລະອຽດເບິ່ງຕາຕະລາງ 4 ແລະ 5 ລຸ່ມນີ້).

ຕາຕະລາງ 4 : ໂຄງການລົງທຶນທຶນລັດຖະບານຮອບວຽນ 11 ຮອດທ້າຍເດືອນ ພະຈິກ 2014 (ແຍກຕາມຂະແໜງ)

| ຂະແໜງການ | ຈຳນວນໂຄງການ | 0% | <50% | >=50% | 100% |
|---|---|---|---|---|---|
| ສຶກສາ | 33 | 0 | 5 | 7 | 21 |
| ຄົມມະນາຄົມ | 3 | 0 | 1 | 0 | 2 |
| ສາທາ | 7 | 1 | 0 | 2 | 4 |
| ນ້ຳສະອາດ | 12 | 0 | 2 | 1 | 9 |
| ກະສິກຳ | 8 | 0 | 1 | 1 | 6 |
| ລວມ | 63 | 1 | 9 | 11 | 42 |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ພະຈິກ 2014.*

ໝາຍເຫດ: ໂດຍອີງຕາມລະບຽບທາງການເງິນຕາມຮູບແບບຂອງລັດກໍຄືຜູ້ໃຫ້ທຶນຈຶ່ງໃຫ້ການປະມູນໂຄງການຍ່ອຍຈຳນວນຫນຶ່ງລຸດລາຄາກາງຊຶ່ງສາມາດສົງລວມໄດ້ ຕົກເປັນມູນຄ່າ 617,703,637 ກີບ ສະນັ້ນ ສຳລັບງົບປະມານຕົວຈິງທີ່ຈະໄດ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ລັດສະນັບສະໜູນແມ່ນ 15,382,296,633 ກີບ ເຊິ່ງຖືວ່າຕ່ຳກວ່າຕ່ຳກວ່າງົບປະມານທັງໝົດທີ່ໄດ້ວາງແຜນ (16 ຕື້ກີບ) ທີ່ນຳໃຊ້ທຶນສຳລັບສົກປີດັ່ງກ່າວ.

ຕາຕະລາງ 5: ໂຄງການສົບທົບທຶນລັດຖະບານຮອບວຽນ 11 ຮອດທ້າຍເດືອນ ພະຈິກ 2014 (ແຍກຕາມແຂວງ)

| ແຂວງ | ຈຳນວນໂຄງການ | 0% | <50% | >=50% | 100% |
|---|---|---|---|---|---|
| ຫົວພັນ | 20 | 0 | 0 | 4 | 16 |
| ຊຽງຂວາງ | 15 | 0 | 0 | 0 | 15 |
| ສະຫວັນນະເຂດ | 15 | 0 | 6 | 3 | 6 |
| ສາລະວັນ | 6 | 0 | 0 | 3 | 3 |
| ອັດຕະປື | 7 | 1 | 3 | 1 | 2 |
| ລວມ | **63** | 1 | **9** | **11** | **42** |

*ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ພະຈິກ 2014.*

## 2. 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການຍ່ອຍໃນຮອບວຽນ 9 ແລະ 10

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າຫມາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນ້ຳທາ) ແລະ ນຳໃຊ້ງົບປະມານທັງໝົດ 7,653,772 ໂດລາສະຫະລັດ. ມີພຽງຈຳນວນ 257 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100 % ແລະ ງົບປະມານທີ່ໄດ້ນຳໃຊ້ 7,478,310 ໂດລາສະຫະລັດ ຫລື 98% ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດ ບາງໂຄງການໃນຮອບວຽນດັ່ງກ່າວແມ່ນຍັງມີຄວາມຫລ້າຊ້າ ແລະ ບໍ່ສຳເລັດຕາມຄາດໝາຍ, ມີ 4 ໂຄງການຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື 1 ໂຄງການທີ່ຢູ່ແຂວງ ເຊກອງ ແລະ 3 ໂຄງການຢູ່ແຂວງ ອັດຕະປື ແລະ ສ່ວນ 1 ໂຄງການ ຢູ່ແຂວງ ຫລວງນ້ຳທາ ນັ້ນແມ່ນໄດ້ຍົກເລີກການກໍ່ສ້າງ. ສຳລັບຄວາມຫລ້າຊ້າໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວແມ່ນກ່ຽວຂ້ອງກັບທີ່ຕັ້ງໂຄງການ ແລະ ດິນຟ້າ ອາກາດ ແລະ ບັນຫາອື່ນ ໆ ເພື່ອແກ້ໄຂບັນຫາດັ່ງກ່າວ ທລຍ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອແກ້ໄຂ ແລະ ເຮັດໃຫ້ໂຄງການດັ່ງກ່າວປະສົບຜົນສຳເລັດໄວໆນີ້.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 9,889,886 ດອນລາສະຫະລັດ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ, ມີຈຳນວນ 391 ໂຄງການທີ່ໄດ້ສຳເລັດການກໍ່ສ້າງ ແລະ ງົບປະມານ 9,639,698 ໂດລາສະຫະລັດ (97%) ແມ່ນໄດ້ຖືກໂອນສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສຳລັບ 2 ໂຄງການ ແມ່ນຍັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື: 1 ໂຄງການຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ, ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ ແລະ 1 ໂຄງການຢູ່ແຂວງ ຫຼວງພະບາງ ເມືອງໂພນໄຊ ບ້ານຫ້ວຍປຽນ ໂຄງການກໍ່ສ້າງໂຮງຮຽນ ຊັກຊ້າເນື່ອງຈາກວ່າທາງເຂົ້າບ້ານຂາດຕັ້ງແຕ່ຊ່ວງລະດູຝົນ ຫລັງຈາກສ້ອມແປງທາງສຳເລັດແລ້ວຈຶ່ງສາມາດຂົນວັດສະດຸເຂົ້າໄປໄດ້ ປັດຈຸບັນແມ່ນກຳລັງຊຸ້ນຍູ້ໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ສຳເລັດ ແລະ ອຳນວຍຄວາມສະດວກສູງສຸດໃຫ້ຊຸມຊົນ.

### 2. 3. ແຜນການດຳເນີນງານໃນສົກປີ 2014-2015

ໃນສົກປີ 2014-2015 ນີ້, ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະເລັ່ງໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກລຸ່ມນີ້ໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍ:

- ເອົາໃຈໃສ່ໃນການວາງແຜນ, ສຳຫຼວດອອກແບບ, ແລະ ຂັ້ນຕອນຕ່າງໆກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍໃນຮອບວຽນ 12 (ສົກປີ 2014-2015). ໃນນັ້ນ, ມີ 74 ໂຄງການ ທີ່ເປັນທຶນສົບທົບຈາກລັດຖະບານເອົາ ສຳລັບໂຄງການຂອງ ທລຍ ຫລັງຈາກສຳເລັດການປະຊຸມປະສານງານ ແລະ ວາງແຜນພັດທະນາຂັ້ນກຸ່ມ, ບ້ານ ແລະ ເມືອງເຫັນວ່າມີຈຳນວນ 369 ໂຄງການທີ່ໄດ້ຖືກຈັດລຽງເຊິ່ງຂັ້ນຕອນຕໍ່ໄປແມ່ນ ການສຳຫລວດຮັບຮອງການອອກແບບຂອງໂຄງການຕົວຈິງ ເຊິ່ງອາດຫລຸດຫລືເພີ່ມຂຶ້ນແມ່ນອີງຕາມສະພາບຄວາມເປັນຈິງພາຍຫລັງສຳຫລວດທັງໝົດ.
- ຈັດຕັ້ງປະຕິບັດໂຄງການຍ່ອຍເພີ່ມທີ່ກ່ຽວກັບຫ້ອງນ້ຳ ແລະ ເພດານຂອງໂຮງຮຽນ ແລະ ສຸກສາລາ ເຊິ່ງເປັນແຫຼ່ງທຶນເພີ່ມຈາກ ອົງການຮ່ວມມືເພື່ອການພັດທະນາປະເທດສະວິດເຊີແລນ ຈຳນວນ 436.000 ໂດລາສະຫະລັດ ໃຫ້ສຳເລັດຕາມຄາດໝາຍ.
- ຈັດຕັ້ງປະຕິບັດໂຄງການຍ່ອຍຈາກບ້ວງທຶນ ຂອງ ໂຄງການປັບປຸງຊີວິດການເປັນຢູ່ ຢູ່ເຂດ ເນີນສູງ ມີ 10 ໂຄງການທີ່ຈັດຕັ້ງຢູ່ແຂວງສາລະວັນ, ເຊກອງ ແລະ ອັດຕະປື ໃຫ້ສຳເລັດ ຕາມແຜນ.
- ເລັ່ງໃສ່ຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ຮອບວຽນ 9, 10, ແລະ 11 ທີ່ຍັງເຫຼືອໃຫ້ສຳເລັດ. ລວມທັງຕິດຕາມການນຳໃຊ້ ແລະ ບຳລຸງຮັກສາບັນດາໂຄງການທີ່ເຮັດສຳເລັດໄປແລ້ວ ໃນຮອບວຽນຜ່ານມາວ່າຖືກນຳໃຊ້ ແລະ ອຳນວຍຄວາມສະດວກໃຫ້ຊຸມຊົນໄດ້ພຽງໃດແທ້.
- ເອົາໃຈໃສ່ຂອດການປະສານງານ ລະຫວ່າງ ທລຍ  ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າເຂົ້າໃຈລະບຽບການ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານ ແລະ ຮັບປະກັນປະສິດຕິພາບຂອງວຽກງານ ທລຍ.
- ເຮັດວຽກຮ່ວມກັບຜູ້ໃຫ້ທຶນໃນການລົງມາປະເມີນທ້າຍປີ 2014 ເພື່ອຕີລາຄາຜົນໄດ້ຮັບກ່ຽວກັບວຽກງານຂອງ ທລຍ 2 ແລະ ວາງແຜນໃນການຈັດຕັ້ງປະຕິບັດໃນປີຕໍ່ໄປ.

## *III.* ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ

### 3.1. ຜົນການຈັດຕັ້ງປະຕິບັດກິດຈະກຳ

- ມາຮອດປະຈຸບັນໂຄງການສາມາດສ້າງຕັ້ງກຸ່ມຊ່ວຍເຫລືອຊຶ່ງກັນໃນຮອບວຽນທີ 3 ໃນ 4 ຕົວເມືອງ. ລວມທັງໝົດມີ 35 ບ້ານ,  ມີ ຈຳນວນ 148 ກຸ່ມ ແລະ ມີສະມາຊິກທັງໝົດມີ 2,056 ຄົນ ເພດຊາຍມີ 445 ຄົນ ເທົ່າກັບ 21,7 % ແລະ ເພດຍິງມີ 1,611 ຄົນ ເທົ່າກັບ 78,3 % ໃນ 4 ເມືອງຄື: ເມືອງ ເຊໂປນ, ເມືອງ ນອງ , ເມືອງ ຣ້ຽມ ແລະ ເມືອງ ຊ່ອນ ລາຍລະອຽດເບິ່ງຕາຕະລາງ 1 ຢູ່ຂ້າງລຸ່ມ:

ຕາຕະລາງ 6: ກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນ

| ຊື່ແຂວງ | ຊື່ເມືອງ | ຈຳນວນ ບ້ານ | ຈ/ນ ກຸ່ມ ກຊກ | ຈ/ນ ສະມາຊິກ | ເພດຍິງ | ເພດຊາຍ |
|---|---|---|---|---|---|---|
| ສະຫວັນນະເຂດ | ເຊໂປນ | 10 | 44 | 566 | 371 | 195 |
| | ນອງ | 15 | 67 | 961 | 945 | 16 |
| ຫົວພັນ | ຮ້ຽມ | 4 | 14 | 191 | 111 | 80 |
| | ຊ່ອນ | 6 | 23 | 338 | 184 | 154 |
| <u>ລວມທັງໝົດ:</u> | 4 | 35 | 148 | 2,056 | 1,611 | 445 |

*<u>ແຫລ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ/ຄປພ ພະຈິກ 2014*

ມາຮອດປະຈຸບັນ ໂຄງການສຳເລັດການຂຶ້ນແຜນງົບປະມານໃນຮອບວຽນທີ 2 ເປັນຈຳນວນເງິນທັງໝົດ 411,415 ໂດລາສະຫະລັດ. ສ່ວນຮອບວຽນທີ 3 ສຳເລັດການໂອນເງິນສະໜັບສະໜູນໂຄງການຍ່ອຍໃນ 10 ບ້ານຂອງເມືອງນອງ ດ້ານປັບປຸງຊີວິດການເປັນຢູ່ ຈຳນວນ 1,038,400,000 ກີບ, ເທົ່າກັບ 129,800 ໂດລາສະຫະລັດໃນຈຳນວນສະມາຊິກ 649 ຄົນ ແລະ ຍັງເຫລືອ ຈຳນວນ 312 ຄົນ ກຳລັງປະກອບເອກະສານທີ່ຈະໂອນໃນທ້າຍເດືອນພະຈິກ 2014 ນີ້, ແລະ ດ້ານໂພຊະນາການໄດ້ໂອນໄປແລ້ວ 362,215,000 ກີບ ເທົ່າກັບ 45,276,875 ໂດລາສະຫະລັດ ເພື່ອສ້າງຕັ້ງສູນໂພຊະນາການບ້ານຈຳນວນ 3 ສູນຄື: ສູນ ແກ້ງລົ້ມ, ສູນຕຳລວງ ແລະ ສູນບ້ານແດນວິໄລ. ລວມຈຳນວນທີ່ໂອນໃຫ້ ເມືອງນອງ ທັງໝົດມີຈຳນວນມີ 1,400,615,000 ກີບ ເທົ່າກັບ 175,076 ໂດລາສະຫະລັດ.

### 3.2 ດ້ານການຝຶກອົບຮົມ:

ສຳລັບເມືອງນອງແມ່ນໄດ້ກະກຽມ ລົງໄປ ຄິດໄລ່ເສດຖະກິດຄົວເຮືອນ ໃນຈຳນວນ 5 ບ້ານທີ່ຍັງເຫລືອ ແລະ ຄາດວ່າຈະໃຫ້ສຳເລັດໃນທ້າຍເດືອນ ພະຈິກ 2014 ນີ້ ແລະ ຈະໄດ້ເປີດຊຸດຝຶກອົບຮົມໃຫ້ຊາວບ້ານຕາມກິດຈະກຳຕ່າງໆ ທີ່ປະຊາຊົນໄດ້ເລືອກໄວ້ແລ້ວເຊັ່ນ: ການລ້ຽງໝູ, ລ້ຽງເປັດ, ລ້ຽງໄກ່, ລ້ຽງປາ, ລ້ຽງກົບ, ຕ່ຳຫູກ ແລະ ປູກເຫັດ ເປັນຕົ້ນ. ສ່ວນຈຳນວນ 6 ບ້ານຂອງເມືອງຊ່ອນ ແລະ 4 ບ້ານຂອງເມືອງຮ້ຽມແມ່ນກຳລັງຂຽນແຜ່ນໄລ່ລຽງເສດຖະກິດຄົວເຮືອນ ແລະ ຄາດວ່າຈະໃຫ້ສຳເລັດໃນ ທ້າຍເດືອນ ພະຈິກ 2014 ນີ້. ສ່ວນຈຳນວນ 10 ບ້ານຂອງເມືອງເຊໂປນແມ່ນໄດ້ຈັດຕັ້ງກຸ່ມ ກຊກ ສຳເລັດແລ້ວ ປະຈຸບັນແມ່ນໄດ້ດຳເນີນການສ້າງຕັ້ງກຸ່ມທ້ອນເງິນ ແລະ ໃນທ້າຍເດືອນ 11/2014 ຈະໃຫ້ສຳເລັດ ແລະ ຈັດຕັ້ງປະຕິບັດການຂຽນໂຄງການຍ່ອຍສ້າງແຜນເສດຖະ ກິດຄົວເຮືອນໄປພ້ອມໆກັນ.

ຕາຕະລາງ 7: ກຸ່ມທ້ອນເງິນ

| ເມືອງ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈຳນວນສະມາຊິກຂອງກຸ່ມ | | | | | ຈຳນວນເງິນທ້ອນ ທັງໝົດ 10/2014 |
|---|---|---|---|---|---|---|---|---|
| | | | ລວມ | ຍິງ | % ຍິງ | ຊາຍ | % ຊາຍ | |
| 1-ເຊໂປນ | 10 | 44 | 566 | 371 | 65.5% | 195 | 34.5% | 0 |
| 2-ເມືອງ ນອງ | 15 | 67 | 961 | 945 | 98.3% | 16 | 1.7% | 6.843.000 |
| 3-ເມືອງຮ້ຽມ | 4 | 14 | 191 | 111 | 58% | 80 | 42% | 2.750.000 |
| 4-ເມືອງຊ່ອນ | 6 | 23 | 338 | 184 | 54.4% | 154 | 45.6% | 2.704.000 |
| | 35 | 148 | 2,056 | 1,611 | 78.3% | 445 | 21.7% | 12.297.000 ກີບ |

*<u>ແຫລ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ/ຄປພ ພະຈິກ 2014*

ຕາຕະລາງ 8: ກິດຈະກຳການສ້າງລາຍຮັບ:

| ຊື່ບ້ານ | ຈ/ນ ກຸ່ມ | ຈ/ນ ສ/ຊ | ຈ/ນ ຊາຍ | ຈ/ນ ຍິງ | ກິດຈະກຳ | ທຶນສະໜັບສະໜູນ | ຈ/ນເງິນສ້າງລາຍຮັບ | ຜົນກຳໄລ |
|---|---|---|---|---|---|---|---|---|
| ບ.ຫ້ວຍສາ | 3 | 32 | 20 | 12 | ໄກ່,ໝູ,ປາ | 33,563,000 | 166,060,000 | 132,497,000 |
| ບ.ແຫ່ນຮີ້ງ | 3 | 52 | 29 | 23 | ໄກ່,ໝູ,ຕ່ຳຫູກ | 54,115,000 | 77,635,000 | 23,520,000 |
| ບ.ສາກົກ | 4 | 75 | 53 | 22 | ໄກ່,ປາ,ຕ່ຳຫູກ | 71,617,000 | 213,225,000 | 141,608,000 |
| ບ.ດອນຄູນ | 4 | 79 | 53 | 26 | ໄກ່,ແບ້,ຕ່ຳຫູກ,ໝູ | 82,874,000 | 107,004,000 | 24,130,000 |
| ບ.ແກ້ງກີ | 3 | 34 | 0 | 34 | ຕ່ຳຫູກ | 30,242,000 | 152,181,000 | 121,939,000 |
| ບ.ສະແກງ | 7 | 89 | 45 | 44 | ໄກ່,ປາ,ປູກສາລີ | 78,827,454 | 9,239,000 | -(69,588,454) |
| ລວມ: 6 | 24 | 361 | 200 | 161 | | 351,238,545 | 725,344,000 | 374,105,546 |

*ແຫລ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ, ທລຍ/ຄປພ ພະຈິກ 2014*

### 3.3 ສຳເລັດສະຫລຸບສັງລວມໂຄງການ ຄປພ(ລອງ):

ໄດ້ສຳເລັດເຮັດບົດສະຫລຸບປະຈຳປີຂອງໂຄງການໃນການປະຕິບັດວຽກງານຜ່ານມາແມ່ນສາມາດຈັດຕັ້ງປະຕິບັດໄດ້ 86% ແລະດຳເນີນໃນການນຳໃຊ້ງົບປະມານໄດ້ 62%. ໂຄງການດັ່ງກ່າວແມ່ນໄດ້ບັນລຸເປົ້າໝາຍທີ່ຕັ້ງເອົາໄວ້ຄື : ມີຈຳນວນ 85 ບ້ານ 260 ກຸ່ມ ກຊກ 2,600 ຄົວເຮືອນ ແລະ ຜູ້ໄດ້ຮັບຜົນປະໂຫຍດໃຫ້ໄດ້ 15,600 ຄົນ . ຕາມຄາດໝາຍດັ່ງກ່າວ ຮອດປະຈຸບັນແມ່ນພວກເຮົາສາມາດປະຕິບັດໄດ້ດັ່ງນີ້: 85 ບ້ານ, ໄດ້ 306 ກຸ່ມ; ມີ 4,372 ຄົວເຮືອນ, ເປັນຜູ້ຍິງຈຳນວນ 3,181 ຄົນ ເທົ່າກັບ 73% (ຕາມຄາດໝາຍແມ່ນໃຫ້ຈຳນວນແມ່ຍິງ ກວມເອົາ 60%) ແລະ ຈຳນວນຜູ້ໄດ້ຮັບຜົນປະໂຫຍດ 26,016 ຄົນ. ການປະຕິບັດໂຄງການດັ່ງກ່າວແມ່ນກຳລັງດຳເນີນຕໍ່ໄປຕາມຂັ້ນຕອນທີ່ໄດ້ວາງແຜນເອົາໄວ້.

## *IV. ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ*

**ວຽກພັດທະນາຊຸມຊົນ**

1. ວັນທີ 12-21 ພະຈິກ 2014 ໄດ້ມີການຈັດກອງປະຊຸມປະສານງານການວາງແຜນຂັ້ນເມືອງ ຢູ່ 5 ເມືອງທົດລອງເຮັດ CDD ເຊັ່ນ:ເມືອງຈອມເພັດ ແລະ ເມືອງ ນ້ຳບາກ ແຂວງຫລວງພະບາງ, ເມືອງນອງ ແຂວງສະຫວັນນະເຂດ, ເມືອງໄຊ ແລະ ເມືອງ ນາໝໍ້ ແຂວງອຸດົມໄຊ ໂດຍຜູ້ເຂົ້າຮ່ວມທັງໝົດ 347 ທ່ານ, ຍິງ 110 ທ່ານ.
2. ໄດ້ນຳພາ ທີມງານຜູ້ໃຫ້ທຶນຈາກທະນາຄານໂລກ ລົງຢ້ຽມຢາມ ແລະ ປະເມີນຜົນໂຄງການທົດລອງເຮັດ CDD ຢູ່ກຸ່ມບ້ານແດນວິໄລ (ກຸ່ມບ້ານທີ່ 6), ເມືອງນອງ ແຂວງສະຫວັນນະແຂດ ລະຫວ່າງວັນທີ 23-25 ພະຈິກ 2014 ເຫັນວ່າຜູ້ໃຫ້ທຶນມີຄວາມເພິ່ງພໍໃຈສູງ ຕໍ່ໂຄງການທົດລອງດັ່ງກ່າວ ເພາະວິທີການດັ່ງກ່າວໄດ້ເຂົ້າເຖິງຄອບຄົວທີ່ທຸກຍາກ ຫລາຍກວ່າວິທີທີ່ນຳໃຊ້ຜ່ານມາ, ຜົນສຳເລັດດັ່ງກ່າວ ອາດກາຍເປັນສາເຫດໜຶ່ງຂອງຜູ້ໃຫ້ທຶນ ໃນການສືບຕໍ່ໃຫ້ທຶນແກ່ໂຄງການ ທລຍ ຕື່ມອີກໃນຕໍ່ໜ້າ.
3. ສຳເລັດໃນການນຳເຂົ້າຂໍ້ມູນ ໂຄງການຍ່ອຍຮອບວຽນທີ່ 12 (ສົກປີ 2014-2015) ທີ່ ທລຍ ຈະໃຫ້ການຊ່ວຍເຫລືອ ຢູ່ 278 ກຸ່ມບ້ານ ໃນ 42 ເມືອງ ຂອງ 10 ແຂວງ.
4. ໃນໄລຍະເດືອນຕຸລາທີ່ຜ່ານມາ 37 ເມືອງ ທລຍ ໄດ້ສຳເລັດ ການຈັດກອງປະຊຸມປະສານງານ ແລະ ວາງແຜນພັດທະນາກຸ່ມບ້ານຂັ້ນເມືອງ ຊຶ່ງສາມາດສັງລວມໄດ້ ຈຳນວນໂຄງການຍ່ອຍ ທີ່ ທລຍ ຈະລົງທຶນໃສ່ໃນຮອບ

ວຽນ 12 (ລາຍລະອຽດແຜນພັດທະນາກຸ່ມບ້ານຮອບວຽກ 12 ແມ່ນມີຂໍ້ມູນຢູ່ພະແນກ M&E ໂດຍມາດຖານຂໍ້ມູນ).

5. ລົງສາທິດການຈັດກອງປະຊຸມວາງແຜນພັດກຸ່ມບ້ານໃນຮູບແບບ CDD ເຕັມຮູບແບບ ສໍາລັບ ພະນັກງານ ຫລຍ ທີ່ເຮັດວຽກ ໃນ 4 ເມືອງທົດລອງ ຢູ່ແຂວງ ຫລວງພະບາງ ແລະ ແຂວງ ອຸດົມໄຊ, ຊຶ່ງຈັດຂຶ້ນຢູ່ບ້ານປາງສາ ກຸ່ມບ້ານປາງສາ ມີບ້ານທັງໝົດ 5 ບ້ານ, ແຜນບູລິມະສິດທີ່ຕ້ອງການພັດທະນາຂອງກຸ່ມນີ້ໄລຍະ 5 ປີ ແມ່ນ 18 ກິດຈະກໍາ ລວມມູນຄ່າຄາດຄະເນ 4 ຕື້ກວ່າກີບ ແລະ ແຜນການລົງທຶນຂອງ ຫລຍ ຮອບວຽນ 12 ແມ່ນ ກໍ່ສ້າງຂົວນໍ້າລົ້ນຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດແມ່ນ ປະຊາຊົນ 3 ບ້ານພາຍໃນກຸ່ມ.
6. ຕິດຕາມ ແລະ ສັງລວມຂໍ້ມູນຜູ້ປະສານງານກຸ່ມ, ສະເພາະ 5 ເມືອງທົດລອງ CDD ສາມາດບັນລຸເປົ້າໝາຍ ການສ້າງຜູ້ປະສານງານກຸ່ມບ້ານຍິງຄື 75% ຂອງຈໍານວນກຸ່ມບ້ານທັງໝົດ ແມ່ນໃຫ້ໄດ້ຜູ້ປະສານງານກຸ່ມບ້ານຍິງ 2 ຄົນ/ກຸ່ມບ້ານ (ຍິງ 2 ຊາຍ 1 ຄົນ), ຜົນທີ່ອອກມາເຫັນວ່າ ແຕ່ລະກຸ່ມບ້ານໃນ 5 ເມືອງ ທົດລອງແມ່ນມີແມ່ຍິງ 2 ຄົນ/ກຸ່ມບ້ານ (ເກີນເປົ້າໝາຍທີ່ຕັ້ງໄວ້) ນອກຈາກເມືອງທົດລອງ ໂດຍລວມແລ້ວເຫັນວ່າ ມີທ່າກ້າວທີ່ດີ ໃນການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງຂັ້ນຊຸມຊົນທາງກົງ ແລະ ທາງອ້ອມ ໂດຍການສະໜັບສະໜູນຊຸມຊົນແມ່ຍິງເຂົ້າມາເປັນປະສານງານກຸ່ມບ້ານຫລາຍຂຶ້ນ.
7. ກະຈາຍຂ່າວລົງ ໜັງສືພິມ ແລະ ເວັບໄຊ ແລະ ວິທະຍຸ ຈໍານວນ 3 ເລື່ອງຄື: 8 ເມືອງຂອງແຂວງ ຫົວພັນ ສໍາເລັດກອງປະຊຸມປະສານງານການວາງແຜນຂັ້ນເມືອງ, ກອງທຶນຫລຸດຜ່ອນຄວາມທຸກຍາກເມືອງນໍ້າບາກ ຈັດກອງປະຊຸມປະສານງານການວາງແຜນຂັ້ນເມືອງ, ເມືອງປາກແຊງ ແຂວງ ຫລວງພະບາງ ກັບການພັດທະນາດ້ານພື້ນຖານໂຄງລ່າງທີ່ ຫລຍ ໃຫ້ການສະໜັບສະໜູນໃນສົກປີ 2013-2014.
8. ສໍາເລັດການເຂົ້າຮ່ວມການວາງສະແດງຮູບພາບ, ຂໍ້ມູນ ແລະ ສື່ສິ່ງພິມຕ່າງໆ ຂອງ ຫລຍ ທີ່ກອງປະຊຸມໂຕະມົນປະຈໍາປີ 2014 ທີ່ ໂຮງແຮມດອນຈັນພາເລດ, ໃນວັນທີ 17 ພະຈິກ 14 ສໍາລັບກອງປະຊຸມ ລະຫວ່າງລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາທີ່ໃຫ້ການຊ່ວຍເຫລືອແກ່ ສປປ ລາວ ແລະ ຄັ້ງວັນທີ 11 ພະຈິກ 2014 ສາລັບກອງປະຊຸມ ຄົບຄະນະປະຈໍາປີ 2014 ຂອງຄະນະກໍາມາທິການເພື່ອແມ່ແລະເດັກແຫ່ງຊາດທີ່ຫ້ອງປະຊຸມ ICTC.

**ວຽກວິສະວະກໍາ**

1. ສັງລວມ ແລະ ຕິດຕາມໂຄງການຍ່ອຍຮອບວຽນ 12 ແລະ GOL ສົ່ງໃຫ້ທະນາຄານໂລກເພື່ອຂໍອະນຸມັດໂຄງການ.
2. ສັງລວມໂຄງການຍ່ອຍ 5 ປີຜ່ານມາຂອງ ແຂວງ ຫົວພັນ, ສະຫວັນນະເຂດ, ເຊກອງ, ແລະ ແຂວງ ອັດຕະປືເພື່ອສ້າງໃຫ້ຊ່ຽວຊານໃນການປະເມີນປຽບທຽບໃນການປ່ຽນແປງລາຄາ.
3. ຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນທີ່ 11 ແລະ ສືບຕໍ່ຕິດຕາມການສໍາຫລວດ-ອອກແບບໂຄງການຍ່ອຍຮອບວຽນທີ່ 12.
4. ເຂົ້າຮ່ວມການກວດກາວັດສະດຸຂົວອູ່ 3 ແຫ່ງ ແລະ ທົດສອບປະກອບກ່ອນການລົງນໍ້າຢາກັນໝ້ຽງຢູ່ປະເທດ ສສ ຫວຽດນາມຮ່ວມກັບໂຄງການ Helvetas laos.

5. ສັງລວມຮູບພາບ pictogramme ຂອງແຕ່ລະປະເພດໂຄງການຍ່ອຍເພື່ອໃຫ້ເປັນບົດຮຽນໃຫ້ແກ່ຊຸມຊົນເພື່ອສົມທຽບໂຄງການອັນໃດທີ່ໄດ້ມາດຕະຖານ ແລະ ອັນໃດທີ່ບໍ່ໄດ້ມາດຕະຖານ.
6. ທົບທວນ ແລະ ປັບປຸງແບບຟອມສະພາບແວດລ້ອມ Environmental Code of Practice (ECOP) ເພື່ອໃຫ້ແຂວງນຳໃຊ້ ແລະ ສ້າງຄູ່ມືການກໍ່ສ້າງປະເພດອາຄານສຳລັບຊຸມຊົນໂດຍອີງໃສ່ຄູ່ມືຈາກປະເທດ ກຳປູເຈຍ.

**ວຽກງານຈັດຕັ້ງ**

ຄວາມຄືບໜ້າໃນການການປະເມີນ ແລະ ຄັດເລືອກພະນັກງານ ໃນຕຳແໜ່ງທີ່ຍັງຫວ່າງດັ່ງລຸ່ມນີ້:

1. ໄດ້ສຳເລັດການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
   - ພະນັກງານພັດທະນາຊຸມຊົນປະຈຳເມືອງໃໝ່, ແຂວງ ຜົ້ງສາລີ 01 ຕຳແໜ່ງ ໄດ້ເລີ້ມປະຈຳການ ນັບແຕ່ວັນທີ 20 ຕຸລາ 2014
   - ພະນັກງານວິສະວະກອນອອກແບບ ປະຈຳ ທລຍ ສູນກາງ 01 ຕຳແໜ່ງ ໄດ້ເລີ້ມປະຈຳການ ນັບແຕ່ວັນທີ 01 ທັນວາ 2014
   - ການປະເມີນ ແລະ ຄັດເລືອກຊ່ຽວຊານຕ່າງປະເທດ 02 ຕຳແໜ່ງ: ຊ່ຽວຊານວາງແຜນງົບປະມານ ແລະ ນະໂຍບາຍດ້ານບຸກຄະລາກອນ.
   - ສຳລັບຕຳແໜ່ງຊ່ຽວຊານວາງແຜນງົບປະມານ ພາຍຫລັງມື້ປິດຮັບຮັບສະໝັກ ໃນວັນທີ 24 ຕຸລາ 2014 ໄດ້ຮັບຊີວະປະຫວັດຜູ້ສະໝັກທັງໝົດ 11 ຄົນ, ຜ່ານການປະເມີນຊີວະປະຫວັດໃນເບື້ອງຕົ້ນ ໂດຍທີ່ປຶກສາຕ່າງປະເທດ ປະຈຳ ທລຍ ແລ້ວ ເຫັນວ່າ ບໍ່ມີຜູ້ທີ່ເໝາະສົມຜ່ານເຂົ້າໃນບັນຊີສັ້ນ. ສະນັ້ນ, ຄະນະຮັບຜິດຊອບໂຄງການ ແລະ ຜູ້ໃຫ້ທຶນຈາກທະນາຄານໂລກ ຈຶ່ງເຫັນດີໃຫ້ປະກາດຄືນໃໝ່ ໃນໄລຍະ 24 ພະຈິກ - 8 ທັນວາ 2014.
   - ສຳລັບຕຳແໜ່ງຊ່ຽວຊານດ້ານນະໂຍບາຍບຸກຄະລາກອນ: ພາຍຫລັງມື້ປິດຮັບສະໝັກ ວັນທີ 24 ຕຸລາ 2014 ໄດ້ຮັບຜູ້ສະໝັກທັງໝົດ 13 ຄົນ ແລະ ສາມາດຄັດເລືອກໄດ້ຜູ້ເຂົ້າໃນບັນຊີສັ້ນ 5 ອັນດັບ (1-5). ເຖິງແນວໃດກໍ່ຕາມ ກໍ່ຍັງບໍ່ໄດ້ດຳເນີນການເຈລະຈາກ່ຽວກັບປະຫວັດ ແລະ ສັນຍາກັບຜູ້ທີ່ໄດ້ອັນດັບທີ 1 ເນື່ອງຈາກວ່າ ໃນໄລຍະວັນທີ 17 ພະຈິກ - 4 ທັນວາ ເປັນໄລຍະການກວດກາ-ຕິດຕາມ ແລະ ປະເມີນວຽກ ທລຍ ຂອງຜູ້ໃຫ້ທຶນ ແລະ ຄາດຄະເນຈະມີການຈັດການເຈລະຈາກ່ຽວກັບສັນຍາ ໃນອາທິດທີ 2 ຂອງເດືອນ ທັນວາ 2014.

3. ຕິດຕາມການອະນຸມັດຈາກຜູ້ໃຫ້ທຶນ ສຳລັບ ຕຳແໜ່ງຜູ້ຊ່ວຍບໍລິຫານ-ການເງິນ ຄປພ ປະຈຳແຂວງສະຫວັນນະເຂດ: ໄດ້ມີການເຫັນດີ ແລະ ອະນຸມັດ ໃນການເຊັນສັນຍາເຮັດວຽກກັບຜູ້ຊ່ວຍບໍລິຫານ-ການເງິນ ປະຈຳແຂວງສະຫັວນນະເຂດ ໃນວັນທີ 26 ພະຈິກ 2014 ເຊິ່ງພະນັກງານດັ່ງກ່າວຈະໄດ້ຮັບສັນຍາ ແລະ ເລີ້ມວຽກໃນວັນທີ 01 ທັນວາ 2014.
4. ຕິດຕາມການອະນຸມັດຈາກຜູ້ໃຫ້ທຶນ ກ່ຽວກັບຕໍ່ສັນຍາຂອງຊ່ຽວຊານທີ່ປຶກສາຕ່າງປະເທດ ປະຈຳ ທລຍ ສູນກາງ (Mr. Julien): ໄດ້ຮັບການເຫັນດີ ແລະ ອະນຸມັດການຕໍ່ສັນຍາເຮັດວຽກເປັນລາຍປີ (8 ຕຸລາ 2014 – 7 ຕຸລາ 2015) ໃນວັນທີ 10 ພະຈິກ 2014.

5. ທົບທວນຂອບໜ້າວຽກຂອງແຕ່ລະຕຳແໜ່ງ: ວຽກງານດັ່ງກ່າວ ແມ່ນໄດ້ປະຕິບັດຄຽງຄູ່ກັບການປະເມີນຜົນງານການຈັດຕັ້ງປະຕິບັດວຽກປະຈຳປີຂອງພະນັກງານ, ປະຈຸບັນຍັງຢູ່ໃນລະຫວ່າງການດຳເນີນ ຊຶ່ງຄາດໝາຍແມ່ນໃຫ້ສຳເລັດໃນທ້າຍເດືອນທັນວາ 2014.
6. ກະກຽມປະເມີນຜົນການຈັດຕັ້ງປະຕິບັດວຽກພະນັກງານ ປະຈຳປີ 2014 ເພື່ອອອກສັນຍາປີ 2015: ກຳລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ, ຄາດໝາຍແມ່ນໃຫ້ສຳເລັດໃນກາງເດືອນທັນວາ 2014.
7. ສັງລວມ ແລະ ປະເມີນຜົນການປະຕິບັດວຽກພະນັກງານ ທລຍ ສູນກາງ ຕາມແບບຟອມຂອງ ຄພທສ: ກຳລັງຢູ່ໃນຂັ້ນຕອນການສັງລວມ ແລະ ປະເມີນຄັ້ງສຸດທ້າຍ ໂດຍຄະນະຮັບຜິດຊອບໂຄງການ, ຄາດໝາຍສຳເລັດ ແລະ ສົ່ງໃຫ້ ຄພທສ ແມ່ນວັນທີ 9 ທັນວາ 2014.

## ວຽກຕິດຕາມ ແລະ ປະເມີນຜົນ

1. ວຽກງານພົ້ນເດັ່ນຂອງຂະແນກຕິດຕາມ-ປະເມີນຜົນແມ່ນສຳເລັດການກະກຽມ ແລະ ສົ່ງບົດລາຍງານປະຈຳສົກປີ 2013-2014 ໃຫ້ຜູ້ໃຫ້ທຶນທັນຕາມການົດເວລາ, ບົດລາຍງານດັ່ງກ່າວໄດ້ສະແດງໃຫ້ເຫັນເຖິງຜົນສຳ ເລັດຂອງການຈັດຕັ້ງປະຕິບັດວຽກງານ ທລຍ ລວມທັງສິ່ງທ້າທາຍ ແລະ ບົດຮຽນຕ່າງໆ ທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດຕົວຈິງ. ຍ້ອນການປະຕິບັດຕາມລະບຽບຫລັກການຢ່າງເຄັ່ງຄັດ ຂອງ ທລຍ ຈຶ່ງເຮັດໃຫ້ຜູ້ໃຫ້ທຶນມີຄວາມເພິ່ງພໍໃຈ ແລະ ສະແດງເຈດຈຳນົງທີ່ຈະໃຫ້ການສະໜັບສະໜູນ ໄລຍະສືບຕໍ່ຂອງ ທລຍ ຈົນຮອດປີ 2017.
2. ໄດ້ມີການສັງລວມ ແລະ ຕີລາຄາການຈັດຕັ້ງປະຕິບັດວຽກງານຂອງ ທລຍ 2 ຕະຫລອດໄລຍະເວລາ 3 ປີ ໂດຍອີງຕາມບັນດາຕົວຊີ້ວັດຕ່າງໆຕາມຄູ່ມືຈັດຕັ້ງປະຕິບັດວຽກງານຂອງ ທລຍ ເຊິ່ງໄດ້ສະແດງໃຫ້ເຫັນວ່າໂຄງການຂອງ ທລຍ ສາມາດບັນລຸຄາດໝາຍສູ້ຊົນ ເປັນຕົ້ນສາມາດປັບປຸງພື້ນຖານໂຄງລ່າງໃຫ້ຊຸມຊົນທຸກຍາກຫລາຍກວ່າ 950 ບ້ານ ໃນຈານວນ 278 ກຸ່ມບ້ານ 42 ເມືອງ ໃນ 10 ແຂວງເປົ້າໝາຍ. ພ້ອມດຽວກັນນັ້ນກໍສະແດງໃຫ້ເຫັນເຖິງການມີສ່ວນຮ່ວມຂອງຊຸມຊົນໃນການວາງແຜນ ແລະ ການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນເພດຍິງທີ່ໄດ້ເຂົ້າຮ່ວມຫລາຍກວ່າ 50% ແລະ ຜູ້ທຸກຍາກທີ່ສຸດເຂົ້າຮ່ວມຫລາຍກວ່າ 60 %, ພ້ອມດຽວກັນນັ້ນກໍໄດ້ມີການສັງລວມກ່ຽວກັບຜູ້ໄດ້ຮັບຜົນປະໂຫຍດ ທັງເປັນເພດຍິງ ແລະ ຊົນເຜົ່າສ່ວນນ້ອຍ ເຊິ່ງຖືວ່າເປັນຄາດໝາຍສູ້ຊົນຂອງ ທລຍ.
3. ໄດ້ສຳເລັດການກະກຽມປຶ້ມຄູ່ມືສຳລັບການສັງລວມ ແລະ ວິເຄາະຕົວຊີ້ວັດຜົນໄດ້ຮັບ ເພື່ອຈະນຳໃຊ້ເຂົ້າໃນການຝຶກອົບຮົມ ເພື່ອສ້າງຄູຝຶກໃນຂັ້ນສູນກາງ ທີ່ສາມາດນຳຄວາມຮູ້ດັ່ງກ່າວເພື່ອໄປຝຶກໃຫ້ພະນັກງານຂັ້ນແຂວງ ແລະ ຂັ້ນເມືອງຕໍ່ໄປ.

## ຈັດຊື້-ຈັດຈ້າງ

1. ສຳເລັດການລົງຊຸກຍູ້ວຽກງານການສ້າງຄວາມເຂັ້ມແຂງໃຫ້ກັບທີມງານຈັດຕັ້ງປະຕິບັດ ເມືອງວຽງທອງ, ເມືອງຮົ້ຽມ ແຂວງຫົວພັນ ແລະ ເມືອງໜອງແຮດ, ເມືອງຄູນ ແຂວງ ຊຽງຂວາງ.
2. ສຳເລັດການກວດກາງົບປະມານ ແລ້ວຂໍອະນຸມັດເບີກຈ່າຍງົບປະມານຝຶກອົບຮົມວຽກງານຈັດຊື້-ຈັດຈ້າງໃຫ້ກັບພະນັກງານ ທລຍ ເມືອງ ແຂວງ ສະຫວັນນະເຂດ, ຫລວງນ້ຳທາ, ອັດຕະປື, ເຊກອງ ແລະ ແຂວງ ຊຽງຂວາງ ແລະ ສຳເລັດການກວດກາງົບປະມານ ແລ້ວຂໍອະນຸມັດເບີກຈ່າຍງົບປະມານຝຶກອົບຮົມວຽກງານຈັດຊື້-ຈັດຈ້າງໃຫ້ກັບປະສານງານກຸ່ມບ້ານ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແຂວງ ເຊກອງ.
3. ສຳເລັດການກວດກາງົບປະມານ ແລ້ວຂໍອະນຸມັດເບີກຈ່າຍງົບປະມານເປີດຊອງປະມູນໂຄງການທຶນສົມທົບລັດຖະບານ ຂອງເມືອງຊານໄຊ, ສະໜາມໄຊ ແຂວງ ອັດຕະປື, ເມືອງດາກຈຶງ ແຂວງ ເຊກອງ, ເມືອງຕະໂອ້ຍ

ແຂວງ ສາລະວັນ, ແຂວງຫົວພັນ ແລະ ແຂວງ ຫລວງນ້ຳທາ ແລະ ສຳເລັດງົບປະມານສ້ອມແປງລົດ ທລຍ ແຂວງ ອຸດົມໄຊ ແລະ ແຂວງ ຫລວງພະບາງ.

4. ເຂົ້າຮ່ວມກອງປະຊຸມຝຶກອົບຮົມຢູ່ແຂວງພາກໃຕ້: ແຂວງ ອັດຕະປື, ເຊກອງ, ສາລະວັນ ແລະ ແຂວງ ສະຫວັນນະເຂດ ພ້ອມທັງພເຂົ້າຮ່ວມກອງປະຊຸມຝຶກອົບຮົມຢູ່ແຂວງພາກເໜືອ: ຫລວງນ້ຳທາ, ຜົ້ງສາລີ, ອຸດົມໄຊ, ຫລວງພະບາງ, ຫົວພັນ ແລະ ແຂວງ ຊຽງຂວາງ.
5. ສຳເລັດການກະກຽມບົດກວດກາການຄິດໄລ່ຄວາມຜິດພາດຂອງການຈັດຊື້ ຖົງເປົ້ ແລະ ເປນອນ, ຊຸດປະຖົມພະຍາບານຂັ້ນຕົ້ນ, ກະແຈສ້ອມແປງລົດແບບສຸກເສີນ, ແລະ ກະບອກໃສ່ເຈ້ຍເອສູນ ໃຫ້ກັບພະນັກງານໂຄງການ LONG.

## V. *ແຜນການຈັດຕັ້ງປະຕິບັດສຳລັບເດືອນ ທັນວາ 2014*

ສຳລັບເດືອນ ທັນວາ 2014 ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະເລັ່ງໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກລຸ່ມນີ້ໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍທີ່ກຳນົດໄວ້:

**ວຽກງານຈັດຕັ້ງ:**

1. ສືບຕໍ່ປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານ ຕຳແໜ່ງລຸ່ມນີ້:
    - ພະນັກງານວິສະວະກອນປະຈຳ ເມືອງໃໝ່, ແຂວງ ຜົ້ງສາລີ 01 ຕຳແໜ່ງ
    - ພະນັກງານວິສະວະກອນປະຈຳ ເມືອງສະໝ້ວຍ, ແຂວງ ສາລະວັນ 01 ຕຳແໜ່ງ
    - ປະເມີນ ແລະ ຄັດເລືອກຊ່ຽວຊານຕ່າງປະເທດ 02 ຕຳແໜ່ງ: ຊ່ຽວຊານວາງແຜນງົບປະມານ ແລະ ນະໂຍບາຍດ້ານບຸກຄະລາກອນ.
2. ຈັດຕັ້ງການເຈລະຈາຕໍ່ລອງສັນຍາເຮັດວຽກຂອງຊ່ຽວຊານດ້ານນະໂຍບາຍບຸກຄະລາກອນ.
3. ສືບຕໍ່ທົບທວນກອບໜ້າວຽກຂອງພະນັກງານແຕ່ລະຕຳແໜ່ງ.
4. ສືບຕໍ່ປະຕິບັດການປະເມີນຜົນການຈັດຕັ້ງປະຕິບັດວຽກພະນັກງານ ປະຈຳປີ 2014 ເພື່ອອອກສັນຍາຂອງພະນັກງານ ປະຈຳປີ 2015.
6. ສືບຕໍ່ສັງລວມ ແລະ ປະເມີນຜົນການປະຕິບັດວຽກພະນັກງານ ທລຍ ສູນກາງ ຕາມແບບຟອມຂອງ ຄພທສ.

**ວຽກງານພັດທະນາຊຸມຊົນ:**

1. ຈັດກອງປະຊຸມຝຶກອົບຮົມໃຫ້ຄູຝຶກ CDD ຄັ້ງທີ່ 2 ສາລັບການຈັດຕັ້ງປະຕິບັດໂຄງການ ທລຍ 2 ໂດຍສະເພາະແມ່ນການແລກປ່ຽນບົດຮຽນທີ່ຖອດຖອນໄດ້ຂອງເມືອງທົດລອງ ຮູບແບບ CDD ແລະ ວຽກງານການຈັດຊື້-ຈັດຈ້າງໂດຍຊຸມຊົນເອງ.
2. ເຂົ້າຮ່ວມກອງປະຊຸມສະເຫລີມສະຫລອງວັນລຶບລ້າງທຸກຄວາມຮຸນແຮງທີ່ມີຕໍ່ແມ່ ຍິງ ຊຶ່ງຈັດຂຶ້ນໂດຍຄະນະກຳມະການຢຸດຕິທຸກຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໂດຍການສະໜັບສະໜູນຂອງອົງການແມ່ຍິງສາກົນ (UN Women) ທີ່ສູນການຄ້າລາວໄອເຕັກ ໃນວັນທີ 15 ທັນວາ 2014. ໃນງານຈະມີການວາງສະແດງບູດຈາກອົງການຈັດຕັ້ງຕ່າງໆ ຫລາຍກວ່າ 20 ອົງການຈັດຕັ້ງ ແລະ ມີງານໃຫ້ລາງວັນດີເດັ່ນສຳລັບບູດທີ່ໜ້າສົນໃຈ ແລະ ໄດ້ເນື້ອຫາ ໃນຫົວຂໍ້ "ຢຸດຕິທຸກຄວາມຮຸນແຮງຕໍ່ແມ່ຍິງ".

3. ປະສານງານກັບ ຄພທ ແລະ ທລຍ ກ່ຽວກັບ ແຜນການຈັດສໍາມະນາສໍາລັບພະນັກງານ ທລຍ ແລະ ຄພທສ ຂັ້ນສູນກາງ ໃນຫົວຂໍ້ສິດສະເໝີພາບຍິງ-ຊາຍ ແລະ ຄວາມຮຸນແຮງທີ່ມີຕໍ່ແມ່ຍິງ ທັງນີ້ກໍ່ເພື່ອປູກຈິດສໍານຶກແກ່ພະນັກງານ ທລຍ ແລະ ຄພທສ ທັງຍິງ ແລະ ຊາຍ ໃນຂັ້ນສູນກາງ ໃນຫົວຂໍ້ ສະເໝີພາບຍິງຊາຍ ແລະ ຄວາມຮຸນແຮງທີ່ມີຕໍ່ແມ່ຍິງ ທີ່ຕິດພັນກັບການຈັດຕັ້ງປະຕິ ບັດວຽກງານພັດທະນາ ແລະ ແກ້ໄຂຄວາມທຸກຍາກ.
4. ສັງລວມຂໍ້ມູນທີມງານຈັດຕັ້ງປະຕິບັດຂັ້ນບ້ານ ສໍາລັບ ທລຍ ຮອບວຽນ 12 ທີ່ມີຢູ່ແຕ່ລະເມືອງເປົ້າໝາຍໃນທົ່ວປະເທດ ທັງນີ້ກໍ່ເພື່ອວິເຄາະຂໍ້ມູນແຍກເພດ ເພື່ອແນ່ໃສ່ສົ່ງເສີມຄວາມກ້າວໜ້າໃຫ້ແກ່ແມ່ຍິງທີ່ເປັນທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຜ່ານຂະບວນການຈັດຕັ້ງປະຕິບັດວຽກງານ ທລຍ ໄລຍະ II.
5. ປະສານງານກັບທີມງານໜ່ວຍງານ IEC ເພື່ອຜະລິດ ແລະ ແຈກຢາຍປື້ມຄູ່ມືການຮຽນ ແລະ ການສອນ ກ່ຽວກັບ ສິດສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ສໍາລັບຜູ້ປະສານງານກຸ່ມບ້ານ ຊຶ່ງສະເໜີສອດເຂົ້າໃນວາລະການຈັດກອງປະຊຸມປະຈໍາເດືອນ ແລະ ຝຶກອົບຮົມຄືນສໍາລັບ ຜູ້ປະສານງານກຸ່ມບ້ານຊຶ່ງຈະເລີ່ມຈັດໃນລະຫວ່າງທ້າຍເດືອນ ມັງກອນ ປີ 2015 ນີ້.
6. ໄປຖ່າຍທໍາສາລະຄະດີ ໂຄງການ ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ (ຄປພ) ທີ່ສະຫວັນນະເຂດ ແລະ ຫົວພັນ
7. ເຜີຍແຜ່ຜົນສໍາເລັດຂອງ ທລຍ ຜ່ານສື່ຕ່າງໆ ທີ່ມີຢູ່ຂັ້ນສູນກາງເຊັ່ນ: ຂ່າວກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ.
8. ສືບຕໍ່ກະກຽມການເຮັດສາລະຄະດີຝຶກອົບຮົມຂອງໜ່ວຍງານວິຊາການເຊິ່ງມີ 3 ຫົວຂໍ້ໂຄງການຍ່ອຍຄື: ການຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງ ອາຄານ, ນໍ້າລິນ, ນໍ້າບາດານ.
9. ກະກຽມສືບຕໍ່ເຮັດ MOU  ກັບສື່ຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອເຜີຍແຜ່ຂໍ້ມູນ-ຂ່າວສານ ຂອງ ທລຍ ປະຈໍາສົກປີ 2014-2015 ແລະ ຜະລິດເຄື່ອງມື IEC ສໍາລັບໂຄງການ ຄປພ.

**ວຽກງານ ຕິດຕາມ ປະເມີນຜົນ:**

1. ສັງລວມບັນດາໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດສໍາລັບຮອບວຽນ 12 ສົກປີ 2014-2015 ທີ່ເປັນທຶນຊ່ວຍເຫລືອຂອງຕ່າງປະເທດ.
2. ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍສໍາລັບຮອບວຽນຜ່ານມາ ເພື່ອເຮັດໃຫ້ໂຄງການທັງໝົດໄດ້ຖືກຈັດຕັ້ງປະຕິບັດສໍາເລັດ ແລະ ອໍານວຍຄວາມສະດວກສູງສຸດໃຫ້ແກ່ຊຸມຊົນ. ເປັນຕົ້ນແມ່ນການຕິດຕາມບັນດາໂຄງການທີ່ມີຄວາມລ້າຊ້າ ທັງນີ້ກໍເພື່ອຫາວິທີແກ້ໄຂຕາມຄວາມເໝາະສົມຂອງທ້ອງຖິ່ນ.
3. ເຮັດວຽກຮ່ວມກັບຊ່ຽວຊານດ້ານວຽກງານຕິດຕາມ-ປະເມີນຜົນ ຈາກທະນາຄານໂລກ ເພື່ອກໍານົດຍຸດທະສາດໃນການປັບປຸງ ແລະ ຍົກລະດັບວຽກງານຕິດຕາມປະເມີນຜົນ ໃຫ້ມີຄວາມຮັດກຸມ ແລະ ຕອບສະໜອງຄວາມຕ້ອງການຂອງລັດຖະບານ ກໍຄືຜູ້ໃຫ້ທຶນ.
4. ກະກຽມແຜນສໍາລັບການປັບປຸງຖານຂໍ້ມູນ ເພື່ອໃຫ້ຄອບຄຸມບັນດາຕົວຊີ້ວັດຜົນໄດ້ຮັບຂອງໂຄງການ ແລະ ເພື່ອໃຫ້ຖານຂໍ້ມູນດັ່ງກ່າວໄດ້ຖືກນໍາໃຊ້ຢ່າງມີປະສິດທິຜົນສູງສຸດ ເຊິ່ງຈະມີການພິຈາລະນາທັງການນໍາໃຊ້ແບບ ONLINE ແລະ ແບບ OFFLINE.
5. ຈັດຝຶກອົບຮົມກ່ຽວກັບການເກັບກໍາຂໍ້ມູນກ່ຽວກັບຕົວຊີ້ວັດຜົນໄດ້ຮັບຂອງໂຄງການ ໂດຍອີງຕາມຕົວຊີ້ວັດທີ່ໄດ້ກໍານົດໄວ້ໃນປື້ມຄູ່ ທີ່ທາງພະແນກຕິດຕາມ-ປະເມີນຜົນ ໄດ້ກະກຽມໄວ້.

ວຽກວິສະວະກຳ:

1. ສືບຕໍ່ສັງລວມ ແລະ ຕິດຕາມໂຄງການຍ່ອຍ ຮອບວຽນ 12 ແລະ GOL ສົ່ງໃຫ້ຜູ້ໃຫ້ທຶນ (WB) ເພື່ອຂໍ NOL
2. ສັງລວມໂຄງການຍ່ອຍ 5 ປີ ຜ່ານມາຂອງແຂວງຫົວພັນ, ສະຫວັນນະເຂດ, ເຊກອງ ແລະ ອັດຕະປື.
3. ສືບຕໍ່ສັງລວມຮູບພາບ Pictogramme ຂອງແຕ່ລະປະເພດໂຄງການຍ່ອຍ.
4. ສຳຫລວດໂຄງການຍ່ອຍທີ່ແຂວງຫລວງພະບາງ ຂອງຮອບວຽນທີ່ 12.
5. ຕິດຕາມການຮ່ວມມືລະຫວາງ ທລຍ ແລະ ILO ແລະ ເຂົ້າປະຊຸມຮ່ວມກັບ WSP ເພື່ອສຶກສາຄວາມເປັນໄປໄດ້ໃນການຮ່ວມມື.
6. ຈັດກອງປະຊຸມແລກປ່ຽນກັບ KDP ແຂວງ ຄຳມ່ວນ ແລະ ກວດກາແບບມາດຕະຖານຂອງສຸກສາລາຄືນໃຫມ່.
7. ກະກຽມການລົງກວດກາການຈັດຕັ້ງປະຕິບັດໂຄງການຍ່ອຍທຶນລັດທະບານຮອບວຽນທີ 11 ແລະ 12.

**ຈັດຊື້-ຈັດຈ້າງ**

1. ກວດກາງົບປະມານການເປີດຊອງປະມູນໂຄງການລັດຖະບານຂອງແຂວງ  ສາລະວັນ.
2. ກວດກາງົບປະມານການຝຶກອົບຮົບວຽກງານຈັດຊື້-ຈັດຈ້າງ ໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານ.
3. ຄັດເລືອກບໍລິສັດທີ່ປຶກສາດ້ານການກວດສອບບັນຊີໂຄງການ ທລຍ ແລະ ໂຄງການ LONG ປະຈຳປີ 2014.
4. ຕິດຕາມການຈັດສົ່ງສຳລັບອຸປະກອນການແພດ (ເຄື່ອງແທກລວງສູງ ແລະ ຊີງສັ່ງນ້ຳໜັກ) ໃຫ້ໂຄງການ LONG ທີ່ໄດ້ດຳເນີນຂັ້ນຕອນການຈັດຊື້ສຳເລັດ.
5. ຕິດຕາມການຜະລິດ ແລະ ຈັດສົ່ງ ເຄື່ອງມື IEC ໃຫ້ພະແນກ CD ໂຄງການຂອງ LONG ແລະ PRF ທີ່ໄດ້ເຮັດການປະມູນສຳເລັດແລ້ວ.
6. ສືບຕໍ່ຕິດຕາມການປະມູນຈັດຊື້-ຈັດຈ້າງ ໂຄງການຍ່ອຍ ບ້ວງທຶນສົມທົບລັດທະບານ ຮອບວຽນ 12.
7. ສືບຕໍ່ປັບປຸງຕາຕະລາງຕິດຕາມຄວາມຄືບໜ້າ ຂອງໂຄງການ PRF.
8. ປັບປຸງແຜນການຈັດຊື້ຂອງ ທລຍ ແລະ ໂຄງການ LONG ສົ່ງໃຫ້ຜູ້ໃຫ້ທຶນ.

ວຽກອື່ນໆ

1. ເຮັດວຽກຮ່ວມກັບຄະນະຜູ້ໃຫ້ທຶນທີ່ມາຕິດຕາມກວດກາທ້າຍປີ 2014 ໃນຊ່ວງວັນທີ່ 17 ພະຈິກ - 4 ທັນວາ 2014 ເພື່ອຕິດຕາມຄວາມຄືບຫນ້າຂອງການຈັດຕັ້ງປະຕິບັດວຽກຂອງ ທລຍ ຫລັງຈາກການປະເມີນກາງສະໃໝ.

| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ຄ.ພ.ທ.ສ ຜູ້ອຳນວຍການ ບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ | | |
| ບຸນກວ້າງ ສຸວັນນະພັນ<br>Bounkhouang SOUVANNAPHANH | ທັດທະຈັນ ພົມພັນທະວົງ | ມະນີວັນ ອິນທະປັນຍາ |